ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ປົດຂ່າວພິທີລົງນາມການຮ່ວມມືລະຫວ່າງ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກໂຊກໄຊ ຈຳກັດ ວ່າດ້ວຍການບໍລິການຊຳລະສະສາງຄ່າບໍລິການຕ່າງໆຜ່ານ ທຄຕລ (BILL PAYMENT)

ນະຄອນຫຼວງວຽງຈັນ, ວັນທີ: 04/09/2019



ວັນທີ 04 ກັນຍາ 2019, ຢູ່ທີ່ ສຳນັກງານໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຈັດພິທີລົງນາມການຮ່ວມມືລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ສະຖາບັນການເງິນຈຸລະພາກ ທີ່ຮັບຝາກເງິນ ໂຊກໄຊ ຈຳກັດ (ສກຊ) ວ່າດ້ວຍການບໍລິການຊຳລະສະສາງຄ່າບໍລິການຕ່າງໆຜ່ານ ທຄຕລ (BILL PAYMENT). ຕາງໜ້າລົງນາມໃນຄັ້ງນີ້ໂດຍ **ທ່ານ ນັນທະລາດ ແກ້ວປະເສີດ**, ຮອງຜູ້ອຳນວຍການໃຫຍ່ ທຄຕລ ແລະ **ທ່ານ ໂຊກໄຊ ສິມໃຈນຶກ**, ປະທານ ກຸ່ມບໍລິສັດໂຊກໄຊ ແລະ ທັງເປັນປະທານສະພາບໍລິຫານ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ໂຊກໄຊ ຈຳກັດ. ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໂດຍ ຄະນະຜູ້ບໍລິຫານທັງສອງຝ່າຍ, ຄະນະພະແນກ, ຄະນະສູນ ແລະ ສາຂາ ຂອງ ທຄຕລ ພາຍໃນນະຄອນຫຼວງວຽງຈັນ ຕະຫຼອດຮອດພະນັກງານຂອງທັງສອງຝ່າຍ ແລະ ສື່ມວນຊົນຈາກຫຼາຍພາກສ່ວນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.

ການບໍລິການຊຳລະຄ່າສາທາລະນຸປະໂພກຜ່ານລະບົບທະນາຄານ (ຫຼື Bill Payment) ຂອງ ທຄຕລ ໄດ້ເລີ່ມໃຫ້ບໍລິການທຳອິດໃນປີ 2009 ແລະ ເປັນບໍລິການທີ່ໄດ້ມີການຊຶມໃຊ້ຫຼາຍ. ມາຮອດປະຈຸບັນ, ທຄຕລ ໄດ້ໃຫ້ບໍລິການຊຳລະຄ່າສາທາລະນຸປະໂພກຮ່ວມກັບ 43 ພາກສ່ວນ ໃນນັ້ນປະກອບມີ: ການຊຳລະຄ່າໄຟຟ້າ, ຄ່ານ້ຳປະປາ, ຄ່າໂທລະສັບ, ຄ່າພາສີ-ອາກອນ, ຄ່າເຊົ່າສາຍເຄເບີ້ນ, ຄ່າບັດນ້ຳມັນເຊື້ອໄຟ, ຄ່າບັດຂ້າມຂົວມິດຕະພາບລາວ-ໄທ

ແຫ່ງທີ 1 ແລະ ຊຳລະຄ່າງວດເຊົ່າສິນເຊື່ອ, ເຊິ່ງການບໍລິການ Bill Payment ທຄຕລ ໄດ້ພັດທະນາ ໃຫ້ສາມາດ ຊຳລະຜ່ານຫຼາຍຊ່ອງທາງຄື: ຜ່ານ ATM, BCEL One, i-Bank ແລະ ຜ່ານປ່ອງບໍລິການ ທຄຕລ. ຮອດທ້າຍ ເດືອນ 7/2019, ທຄຕລ ມີ ATM 403 ຕູ້, ຜູ້ລົງທະບຽນນຳໃຊ້ BCEL One 289.398 Users, i-Bank 12.148 Users, ກວມເອົາຕົວເລກຜູ້ນຳໃຊ້ລະບົບຊຳລະແບບອີເລັກໂທຣນິກຫຼາຍທີ່ສຸດໃນລະບົບທະນາຄານພາຍ ໃນປະເທດ ເຊິ່ງ ທຄຕລ ພວກເຮົາເຊື່ອໝັ້ນວ່າ ຖ້າຂະຫຍາຍການຊຳລະແບບອີເລັກໂທຣນິກນີ້ອອກໄປໃຫ້ກວ້າງ ຂວາງເທົ່າໃດ ກໍ່ຈະເປັນການສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ລູກຄ້າຂອງທະນາຄານໃນການທີ່ຊົມໃຊ້ການບໍລິ ການຂອງຫຼາກຫຼາຍຜູ້ປະກອບການຂຶ້ນເທົ່ານັ້ນ.

ສັນຍາວ່າດ້ວຍການຮ່ວມມືການຊຳລະຄ່າບໍລິການຜ່ານ ທຄຕລ (Bill Payment) ລະຫວ່າງ ທຄຕລ ແລະ ສກຊ ໃນຄັ້ງນີ້ ເພື່ອເພີ່ມຊ່ອງທາງການໃຫ້ບໍລິການລູກຄ້າຂອງ ສກຊ ຜ່ານຫລາຍຊ່ອງທາງຂຶ້ນຕື່ມ ໂດຍ ທຄຕລ ຈະໃຫ້ການບໍລິການຮັບຊຳລະຄ່າບໍລິການ ແລະ ຮອງຮັບການຊຳລະສະສາງຂອງລູກຄ້າ ສກຊ ຜ່ານເຄົ້າເຕ້ີບໍລິການ ທ່ີ່ອລະບົບ ທຄຕລ, ຜ່ານມືຖື Smartphone (BCEL One) ແລະ ຜ່ານ BCEL i-Bank.

ນະໂອກາດນີ້ຂໍສະແດງຄວາມຂອບໃຈມາຍັງລູກຄ້າທຸກທ່ານທ່ີ່ນຳໃຊ້ຜະລິດຕະພັນ ແລະ ບໍລິການ ຂອງ ທຄຕລ ຕະຫຼອດມາ. ທຄຕລ ຈະສືບຕ່ໍພັດທະນາລະບົບການບໍລິການໃຫ້ມີຄວາມທັນສະໄໝ ແລະ ສືບຕ່ໍຮ່ວມມື ກັບພາກສ່ວນອ່ືນໆເພ່ືອອຳນວຍຄວາມສະດວກໃນການຊຳລະສະສາງຕ່າງໆຂອງລູກຄ້າ ໃນຍຸກແຫ່ງການບໍລິການ ທະນາຄານແບບດີຈິຕໍ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທັນສະໄໝ ວ່ອງໄວ ໝັ້ນໃຈ

Call Center: 1555, Facebook: BCEL Bank, Website: www.bcel.com.la